ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ຮັບສະໝັກເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ...
ກ້າວໄປຂ້າງໜ້າສູ່ຄວາມສຳເລັດກັບພວກເຮົາ



ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເປັນທະນາຄານທີ່ດຳເນີນການເຄື່ອນໄຫວວຽກງານພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ. ທຄຕລ ມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະ ອຳນວຍຄວາມສະດວກໃນການເຮັດທຸລະກຳທາງດ້ານການເງິນ ໃຫ້ແກ່ລູກຄ້າ. ປະຈຸບັນ ທຄຕລ ມີ **19** ສາຂາ ແລະ ຫຼາຍກວ່າ **70** ໜ່ວຍບໍລິການທົ່ວປະເທດ. ພວກເຮົາມີຄວາມຍິນດີ ແລະ ຕ້ອງການເພື່ອນຮ່ວມງານຈຳນວນຫຼາຍຕຳແໜ່ງປະກອບໃຫ້ບັນດາພະແນກການ ແລະ ສາຂາທົ່ວປະເທດ ເພື່ອເຂົ້າມາຮ່ວມສ້າງສາ ແລະ ພັດທະນາ ທຄຕລ ໃຫ້ມີຄວາມກ້າວໜ້າ ແລະ ເຕີບໃຫຍ່ໄປພ້ອມໆກັນ.

## ທຄຕລ ສາຂາວັງວຽງ ຕ້ອງການຮັບພະນັກງານໃໝ່ ເພື່ອປະກອບໃຫ້ບັນດາຂະແໜງພາຍໃນທີ່ຈຳເປັນດັ່ງນີ້:

### 1. ວິຊາການໄອທີໜ່ວຍງານ ATM 01 ຕຳແໜ່ງ

**ເງື່ອນໄຂຜູ້ສະໝັກ:** ເພດ: **ຊາຍ , ໂສດ** ແລະ ມີອາຍຸບໍ່ເກີນ **30** ປີ.

- ✔ ມີໃບປະກາດຈົບຊັ້ນສູງຂຶ້ນໄປ ດ້ານວິທະຍາສາດຄອມພິວເຕີ, ວິສະວະກຳຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ຫຼື ສາຂາທີ່ກ່ຽວຂ້ອງ ທີ່ມີຄະແນນ **CGPA** ໂດຍສະເລ່ຍ **2.70** ຂຶ້ນໄປ ຫຼື **6.75** ຂຶ້ນໄປ.
- ✔ ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ລະດັບດີ. ຖ້າຫາກສາມາດເວົ້າພາສາຈີນ, ຫວຽດ, ຝຣັ່ງໄດ້ຍິ່ງເປັນການດີ.
- ✔ **ຕ້ອງເປັນຄົນທ້ອງຖິ່ນແຂວງວຽງຈັນ ຫຼື ແຂວງໃກ້ຄຽງ.**
- ✔ ຖ້າເປັນຄົນພື້ນຖານເມືອງວັງວຽງຍິ່ງເປັນການດີ.
- ✔ ມີສຸຂະພາບແຂງແຮງ, ມີມະນຸດສຳພັນດີ, ມີຄວາມອົດທົນ, ຊື່ສັດ ແລະ ສາມາດເຮັດວຽກນອກໂມງການໄດ້.
- ✔ ມີປະສົບການວຽກງານ ATM, ຄວາມຮູ້ພື້ນຖານສ້ອມແປງຄອມຍິ່ງເປັນການດີ.

### 2. ວິຊາການຂະແໜງຄັງສາງ 01 ຕຳແໜ່ງ:

**ເງື່ອນໄຂຜູ້ສະໝັກ:** ເພດ: **ຊາຍ, ໂສດ** ແລະ ມີອາຍຸບໍ່ເກີນ **30** ປີ.

- ✔ ມີໃບປະກາດຈົບຊັ້ນສູງຂຶ້ນໄປ ດ້ານການເງິນ, ການທະນາຄານ, ບັນຊີ, ເສດຖະສາດ, ບໍລິຫານທຸລະກິດ ຫຼື ສາຂາທີ່ກ່ຽວຂ້ອງ ທີ່ຄະແນນ **CGPA** ໂດຍສະເລ່ຍ **2.70** ຂຶ້ນໄປ.
- ✔ ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ລະດັບດີ.
- ✔ ຖ້າຫາກສາມາດເວົ້າພາສາຈີນ, ຫວຽດ, ຝຣັ່ງໄດ້ຍິ່ງເປັນການດີ.
- ✔ **ຕ້ອງເປັນຄົນທ້ອງຖິ່ນແຂວງວຽງຈັນ ຫຼື ແຂວງໃກ້ຄຽງ.**
- ✔ ຖ້າເປັນຄົນພື້ນຖານເມືອງວັງວຽງຍິ່ງເປັນການດີ.
- ✔ ມີຄວາມຮູ້ພື້ນຖານການນຳໃຊ້ຄອມພິວເຕີ (ຖ້າມີໃບຢັ້ງຢືນຍິ່ງເປັນການດີ)
- ✔ ສາມາດເຮັດວຽກພາຍໃຕ້ໄລຍະເວລາທີ່ກຳນົດໃຫ້, ມີຄວາມອົດທົນຫ້າວຫັນ ແລະ ສາມາດເຮັດວຽກເປັນທີມໄດ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ຮັບສະໝັກເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ...
ກ້າວໄປຂ້າງໜ້າສູ່ຄວາມສຳເລັດກັບພວກເຮົາ



**ຄຸນລັກສະນະຜູ້ສະໝັກ:**

- ✓ ຊື່ສັດບໍລິສຸດ, ມະນຸດສຳພັນດີ
- ✓ ບຸກຄະລິກວ່ອງໄວຫ້າວຫັນ ແລະ ອົດທົນ .
- ✓ ລະອຽດຮອບຄອບ, ມີລະບຽບວິໄນ ແລະ ຮັບຜິດຊອບສູງ.
- ✓ ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້.
- ✓ ສາມາດເຮັດວຽກພາຍໃຕ້ຄວາມກົດດັນ.
- ✓ ມີໃຈຮັກໃນວຽກງານບໍລິການ.
- ✓ ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະ.

**ວິທີສະໝັກວຽກ:**

1) ຜູ້ທີ່ສົນໃຈສາມາດພົວພັນເຂົ້າຮັບເອກະສານດ້ວຍຕົນເອງໄດ້ທີ່ **ຂະແໜງຫ້ອງການ-ບັນຊີ-ໄອທີ ຂອງ ທຄຕລ ສາຂາວັງວຽງ** ສອບຖາມຂໍ້ມູນໂທ: **023 511670.** ໃນການຂໍຮັບແບບຟອມສະໝັກວຽກຕ້ອງຖືໃບປະກາດວິຊາສະເພາະ ແລະ ໃບຄະແນນສະບັບຂອງແທ້ມາຢັ້ງຢືນນຳ.
2) ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍ-ເອື້ອຍ ແລະ ພີ່ນ້ອງຂອງຜູ້ສະໝັກງານມາພົວພັນຮັບ-ສົ່ງເອກະສານແທນ.
3) ***<u>ກຳນົດເລີ່ມແຈກ-ຮັບ ເອກະສານສະໝັກຕັ້ງແຕ່ ວັນທີ 16/08/2017 – 31/08/2017.</u>***

ວັງວຽງ, ວັນທີ 16/08/2017
ຫົວໜ້າສາຂາວັງວຽງ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ສາຂາ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ວັງວຽງ

ເອກະລາດ ກັນຍາວົງ